ຂ່າວພາຍໃນ
*Internal Newsletter*
ມິດຕະພາບ ລາວ - ຍີ່ປຸ່ນ
*Friendship for Laos and Japan*
No. 01- 26/12/2012

ກະຊວງ ໂຍທາທິການ ແລະ ຂົນສົ່ງ
ກົມເຄຫາ ແລະ ຜັງເມືອງ
ໂຄງການ ພັດທະນາ ຄວາມອາດສາມາດ
ດ້ານການຄຸ້ມຄອງ ໃຫ້ແກ່ຂະແໜງນ້ຳປະປາ
The Capacity Development Project for Improvement of Management Ability of Water Supply Authorities



A Data management workshop was held on 30 November with a total of 52 participants from DHUP, WASRO, NPNL, PNP-LPB, PNP-KHM, ADB consultants and JICA experts at NPNL's Training Center in Chinaimo. Facilitated by Mr. Noupheuak Virabouth, Deputy Director General of DHUP (Deputy Project Director of this JICA Project), the participants discussed a variety of data that they usually deal with in their daily work and considered what kind of data is necessary for corporate planning. They were divided into 4 groups to discuss in a friendly manner. Some of the participants, especially ones from PNP-LPB and PNP-KHM, met each other for the first time. This workshop generated a by-product of human networking among pilot WSSEs.

Due to the time limitation, the workshop could not reach a point to decide "data necessary for corporate planning." However, Mr. Masahiro Shimomura, Chief Advisor, appreciated active participation of the project counterparts and proposed next steps: 1. JICA expert team will review the data items discussed in the workshop and draft "data necessary for corporate planning." 2. A seminar will be organized to finalize "data necessary for corporate planning" in each pilot WSSE to develop an improvement plan for data management. Introducing its annual report of Saitama City Waterworks Bureau, Mr. Masahiro also explained that each pilot WSSE can make its annual report based on "data necessary for corporate planning." The JICA Project will move forward to data management and corporate planning incorporated with monitoring activities by WSSE itself and WASRO in 2013.

In the workshop, experiences of the ADB Water Supply Project were also shared by Mr. Souvannaseng Saymontry and Mr. Phiengkham Sisoulath, ADB consultants. They mainly introduced how they made 3-year rolling plans in other provinces, which is imposed by Prime Minister Decision in 1999. JICA expert team will integrate important points of the ADB's experiences and propose a method of corporate planning in a way that each WSSE makes its corporate plan by themselves through data management.

## IMAGE OF PROJECT ACTIVITIES IN 2013
















ຂ່າວພາຍໃນ
*Internal Newsletter*
# ມິດຕະພາບ ລາວ - ຍີ່ປຸ່ນ
*Friendship for Laos and Japan*
No. 01- 26/12/2012

ກະຊວງ ໂຍທາທິການ ແລະ ຂົນສົ່ງ
ກົມເຄຫາ ແລະ ຜັງເມືອງ
ໂຄງການ ພັດທະນາ ຄວາມອາດສາມາດ
ດ້ານການຄຸ້ມຄອງ ໃຫ້ແກ່ຂະແໜງນໍ້າປະປາ
The Capacity Development Project for
Improvement of Management Ability of
Water Supply Authorities



ກອງປະຊຸມບໍລິຫານຂໍ້ມູນໂຄງການພັດທະນາ ຄວາມອາດສາມາດດ້ານການຄຸ້ມຄອງ ໃຫ້ແກ່ຂະແໜງນໍ້າປະປາ ໄດ້ຈັດຂຶ້ນໃນວັນທີ 30 ເດືອນພະຈິກ 2012, ທີ່ ສູນຝຶກອົບຮົມນໍ້າປະປາ ຈີນາຍໂມ້ ນະຄອນຫລວງວຽງຈັນ ເຊິ່ງມີຜູ້ເຂົ້າຮ່ວມທັງໝົດ 52 ຄົນ ຈາກ ກົມເຄຫາ ແລະ ຜັງເມືອງ, ຫ້ອງການດັດສົມນໍ້າປະປາ ກະຊວງ ໂຍທາທິການ ແລະ ຂົນສົ່ງ ແລະ ມີໂຄງການຕົວແບບ ລັດວິສາຫະກິດນໍ້າປະປານະຄອນຫລວງ, ຫລວງພະບາງ, ຄໍາມ່ວນ ແລະ ຊ່ຽວຊານຂອງໂຄງການ JICA ເຂົ້າຮ່ວມ. ນອກຈາກນັ້ນຍັງໄດ້ເຊີນທີ່ປຶກສາໂຄງການນໍ້າປະປາ (ADB). ນໍາພາໃນການຈັດກິດຈະກໍາດັ່ງກ່າວ ໂດຍ ທ່ານ ໝູເຜືອກ ວິລະບຸດ, ຮອງຫົວໜ້າກົມເຄຫາ ແລະ ຜັງເມືອງ, ບັນດາຜູ້ເຂົ້າຮ່ວມ ໄດ້ມີການສົນທະນາແລກປ່ຽນຂໍ້ມູນຫລາຍຢ່າງທີ່ພົວພັນກັບຂະແໜງນໍ້າປະປາ ແລະ ກິດຈະກໍາຂອງໂຄງການ ພ້ອມດຽວກັນນັ້ນ ກໍໄດ້ພິຈາລະນາ ຂໍ້ມູນປະເພດໃດທີ່ຈໍາເປັນ ແລະ ເໝາະສົມ ເພື່ອຕອບສະໜອງເຂົ້າໃນການດໍາເນີນແຜນທຸລະກິດນໍ້າປະປາ. ໃນວາລະກອງປະຊຸມດັ່ງກ່າວ ໄດ້ແບ່ງອອກເປັນ 4 ກຸ່ມສົນທະນາເພື່ອແລກປ່ຽນ ແລະ ປະກອບຄໍາຄິດເຫັນ.





ຜ່ານການຈັດກິດຈະກໍາ ແລະ ສໍາມະນາໃນຄັ້ງນີ້ ກໍໄດ້ລວບລວມຂໍ້ມູນທີ່ສໍາຄັນ ໃຫ້ແກ່ແຜນດໍາເນີນທຸລະກິດ. ພ້ອມນີ້ ທ່ານ ມາຊາຣິໂຣະ ຊິໂມມູຣະ ຫົວໜ້າທີ່ປຶກສາ, ກໍໄດ້ກ່າວສະແດງຄວາມຂອບໃຈ ຕໍ່ບັນດາຜູ້ເຂົ້າຮ່ວມທຸກທ່ານ ແລະ ກໍໄດ້ກ່າວຕື່ມເຖິງບາດກ້າວຕໍ່ໄປ ໃນການປະຕິບັດກິດຈະກໍາໂຄງການ ດັ່ງຕໍ່ໄປນີ້: 1. ທີມງານຊ່ຽວຊານຂອງໂຄງການ JICA ຈະທົບທວນຂໍ້ມູນທີ່ເກັບກໍາໃນກອງປະຊຸມຄັ້ງນີ້ ເພື່ອປະກອບເຂົ້າໃນແບບຮ່າງ "ຂໍ້ມູນຈໍາເປັນ ສໍາລັບແຜນດໍາເນີນທຸລະກິດ". 2.ຈັດກອງປະຊຸມໃນແຕ່ລະໂຄງການຕົວແບບເພື່ອສະຫລຸບແບບຮ່າງດັ່ງກ່າວ ແລະ ເພື່ອ ພັດທະນາແຜນການປັບປຸງ ການບໍລິຫານຂໍ້ມູນ. ທ່ານ ມາຊາຣິໂຣະ ຍັງໄດ້ກ່າວຕື່ມ ເພື່ອໃຫ້ແຕ່ລະໂຄງການຕົວແບບສາມາດສ້າງບົດລາຍງານປະຈໍາປີ ອີງໃສ່ "ຂໍ້ມູນທີ່ຈໍາເປັນ ສໍາລັບແຜນດໍາເນີນທຸລະກິດ".

ໂຄງການ JICA ຈະກ້າວຕໍ່ໄປ ເພື່ອການບໍລິຫານຂໍ້ມູນ ແລະ ແຜນດໍາເນີນທຸລະກິດ ໂດຍການຕິດຕາມກິດຈະກໍາການເຄື່ອນໄຫວວຽກງານຂອງ ລັດວິສາຫະກິດນໍ້າປະປາ ແລະ ຫ້ອງການດັດສົມນໍ້າປະປາ ພາຍໃນປີ 2013.

ການປະຊຸມຄັ້ງນີ້, ໂຄງການນໍ້າປະປາ ADB ກໍໄດ້ຮ່ວມແບ່ງປັນປະສົບການໃນການເຮັດວຽກ ໂດຍມີ ທ່ານ ສຸວັນນະແສງ ໄຊມົນຕຣີ ແລະ ທ່ານ ພຽງຄໍາ ສີສຸລາດ, ທີ່ປຶກສາໂຄງການນໍ້າປະປາ ADB, ທັງສອງທ່ານ ໄດ້ນໍາສະເໜີ ວິທີສ້າງແຜນຮອບວຽນ 3 ປີ ໃນບັນດາແຂວງຕ່າງໆ ໂດຍອີງຕາມດໍາລັດ ຂອງທ່ານນາຍົກລັດຖະມົນຕີ ໃນປີ 1999.

ທີມງານຊ່ຽວຊານ JICA ຈະລວບລວມຈຸດສໍາຄັນ ຈາກປະສົບການຂອງ ໂຄງການນໍ້າປະປາ ADB ແລະ ຈະສະເໜີແຜນດໍາເນີນທຸລະກິດຕາມແຕ່ລະໂຄງການຕົວແບບຜ່ານການນໍາໃຊ້ການບໍລິຫານຂໍ້ມູນ.





ຮູບສະແດງ ການປະຕິບັດກິດຈະກໍາໂຄງການ ໃນປີ 2013






